# ຄູ່ມື
# ຜະລິດຝຸ່ນຊີວະພາບດ້ວຍການລ້ຽງເທວະດິນ



ຂຽນ ແລະ ຈັດໜ້າໂດຍ: ທ້າວ ໄຊ່ແກ້ວ ພິມວິໄລ

ອອກແບບໜ້າປົກໂດຍ: ທ້າວ ວັດທະນາ ສີວິໄຊ

ທີ່ປຶກສາ: ທ່ານ. ສົມບັດ ສົມພອນ

ບັນນາທິການໂດຍ:

ທ່ານ ອ.ຈ ໂພໄຊ ຈັນທະວົງສາ

ທ່ານ ຄຳເສີມ ມະນີວົງ

ສູນອົບຮົມຮ່ວມພັດທະນາ 2008

ພິມຄັ້ງທີ່ 1 ຈຳນວນ ຫົວ

www.padetc.org

## ຄຳນຳ

ການເອີ້ນຂີ້ກະເດືອນເປັນ''ເຫວະດິນ''ນີ້ເປັນການໃຫ້ກຽດສັດຕົວນ້ອຍດັ່ງກ່າວໃຫ້ສົມກັບຄຸນຄ່າ ແລະ ຄວາມສຳຄັນຂອງມັນ. ບາງລັກສະນະພິເສດຂອງ ''ເຫວະດິນ'' (ຂີ້ກະເດືອນ) ມີດັ່ງຕໍ່ໄປນີ້:

1. ''ເຫວະດິນ''(ຂີ້ກະເດືອນ) ເປັນສັດທີ່ເກົ່າແກ່ ແລະ ທົນທານຫຼາຍຄືໄດໂນເສົາທີ່ລະຫລາຍຫາຍໄປຈາກໂລກໄປແຕ່ ''ເຫວະດິນ'' ຍັງສືບຕໍ່ມີຊີວິດມາຮອດປະຈຸບັນ.
2. ''ເຫວະດິນ''ສາມາດປັບປຸງດິນຂີ້ຮ້າຍໃຫ້ເປັນດິນທີ່ສົມບູນ ແລະ ມີຄຸນຄ່າຕໍ່ການປູກພືດ.
3. ''ເຫວະດິນ''ກິນຈຸລິນຊີທີ່ລະລາຍຈາກເສດພືດ(ອິງຄະທາດ) ແລະ ຂະຫຍາຍພັນຈຸລິນຊີທີ່ເປັນປະໂຫຍດສິ່ງນັ້ນຢູ່ໃນລຳໄສ້ຂອງມັນແລ້ວຖ່າຍເທອອກມາເປັນຖົງຈຸລິນຊີນ້ອຍໆ(ຂີ້ຂອງຂີ້ກະເດືອນ)ທີ່ລ້ວນແລ້ວແຕ່ເປັນປະເພດຈຸລິນຊີທີ່ເປັນປະໂຫຍດຕໍ່ການປູກພືດ ແລະ ປັບປຸງດິນ
4. ''ເຫວະດິນ'' ເຮັດໜ້າທີ່ເຈາະຮູໃນດິນເພື່ອໃຫ້ອົກຊີ ແລະ ນ້ຳລົງໄປຫຼໍ່ລ້ຽງຮາກພືດໃຫ້ສະດວກ ແລະ ຂະຫຍາຍຕົວໄດ້ດີ.
5. ''ເຫວະດິນ'' ເປັນອາຫານລ້ຽງກົບ, ໄກ່, ນົກ, ປາ ທີ່ລ້ວນແລ້ວແຕ່ເປັນອາຫານທີ່ສຳຄັນແກ່ມະນຸດ.
6. ເມື່ອຄົນເຮົາຕາຍໄປຈຸລິນຊີ ແລະ ເຫວະດິນ ຈະປຸງແຕ່ງຊາກສົບຂອງຄົນເຮົາໃຫ້ເປັນປະໂຫຍດຄືນນັ້ນກໍ່ຄືປັບປຸງດິນໃຫ້ພືດເກີດໄດ້ດີເພື່ອໃຫ້ເປັນປະໂຫຍດແກ່ຄົນ ແລະ ສັດອື່ນໆຄືນໄດ້. ສະຫລຸບໄດ້ວ່າ''ເຫວະດິນ'' (ຂີ້ກະເດືອນ) ເປັນສັດທີ່ສຳຄັນໃນການບຳບັດທຳມະຊາດແລະ ສິ່ງທີ່ມີຊີວິດ. ທ່ານເຄີຍຄິດບໍວ່າ, ຖ້າບໍ່ມີເຫວະດິນການພັດທະນາ, ການດຳລົງຊີວິດຂອງຄົນເຮົາຈະຢູ່ໃນສະພາບໃດ ? ແລະ ຈະຍືນຍົງປານໃດ?

ຍ້ອນການຍອມຮັບຄວາມສຳຄັນຂອງສັດນ້ອຍຕົວນີ້ທີ່ໄດ້ເຮັດວຽກຊ່ວຍມະນຸດທັງເວັນທັງຄືນບໍ່ຈົ່ມບໍ່ວ່າຕະຫຼອດມາ. ສູນອົບຮົມຮ່ວມພັດທະນາ ຈິ່ງຜະລິດປື້ມຄູ່ມືນີ້ອອກມາເພື່ອຊັກຊວນສັງຄົມໂດຍສະເພາະແມ່ນນັກຮຽນຊັ້ນປະຖົມໃຫ້ຮູ້ລ້ຽງ ແລະ ນຳໃຊ້ເຫວະດິນເຂົ້າໃນການບຳບັດສິ່ງເສດເຫຼືອຈາກຄົວເຮືອນໃຫ້ເປັນຝຸ່ນຊີວະພາບເພື່ອຜະລິດອາຫານປອດສານພິດແກ່ຄົນເຮົາ.

ຫວັງຢ່າງຍິ່ງວ່າຄົງໄດ້ຮັບການຮ່ວມມືຈາກທຸກພາກສ່ວນດ້ວຍ.

ສົມບັດ ສົມພອນ

www.padetc.org

## ເອກະສານອ້າງອີງ

1. ປະສົບການໆລ້ຽງຂີ້ກະເດືອນແດງ””ເທວະດິນ”” ພັນຫວຽດນາມ Peryonic excavatus perrie ແລະ ພັນຮອນແລນ Eisenia Fertida

2. ຂໍ້ມູນໄປທັດສະນະສຶກສາທີ່ Philippines



## ສາລະບານ

| | ໜ້າ |
|---|---|
| 1. ຄວາມເປັນມາ…………………………………………… | 1 |
| 2. ຈຸດປະສົງ………………………………………………. | 2 |
| 3. ຮູບຮ່າງ ແລະ ລັກສະນະຂອງເທວະດິນ…………………… | 3 |
| 4. ວົງຈອນຊີວິດຂອງເທວະດິນ……………………………… | 4 |
| 5. ທີ່ຢູ່ອາໃສຂອງເທວະດິນ…………………………………. | 7 |
| 6. ຄູນປະໂຫຍດຂອງເທວະດິນ……………………………… | 9 |
| 7. ວິທີການລ້ຽງເທວະດິນກຳຈັດຂີ້ເຫຍື້ອ…………………… | 10 |
| 8. ລ້ຽງເທວະດິນເປັນຄອກເພື່ອເອົາຝຸ່ນໃສ່ສວນຄົວ…………… | 11 |
| 9. ການນຳໃຊ້ຝຸ່ນເທວະດິນເຂົ້າໃນການປູກພືດຕ່າງໆ................ | 17 |
| 10.ຜູ້ໃດແດ່ຄວນລ້ຽງເທວະດິນ……………………………… | 20 |
| 11. ມີອັນໃດແດ່ທີ່ເທວະດິນຈະຊ່ວຍໃຫ້ເດັກເກັ່ງ,ດີ, ແລະ ມີປະໂຫຍດ ຕໍ່ ສັງຄົມ | 21 |

## ຄວາມເປັນມາ

ເຫວະດິນເປັນສັດຊະນິດໜຶ່ງທີ່ອາໃສຢູ່ຕາມໃຕ້ດິນ,ເສດທີ່ເນົ່າເປື່ອຍຕ່າງໆຂອງສານອິນຊີແລະແຄມແມ່ນ້ຳລຳເຊ.

ເຫວະດິນມີຫລາຍກວ່າ 35 ສາຍພັນ,ແຕ່ພັນທີ່ຈະເວົ້າເຖິງໃນປື້ມຄູ່ມືຫົວນີ້ເປັນພັນ (AfricanNightcrawler Eudrilus Euseniae) ມັນມີທຸກລະດູການ ແລະ ມີຄວາມສາມາດພິເສດໃນການຊ່ວຍກຳຈັດສິ່ງເສດເຫຼືອໃນຄົວເຮືອນ ແລະ ສິ່ງເສດເຫລືອຕ່າງໆຈາກທຳມະຊາດ.

ຂີ້ຂອງເຫວະດິນເປັນຝຸ່ນທີ່ມີຄຸນະພາບສູງ ແລະ ໂຕເຫວະດິນຍັງດຸດດິນໃຫ້ດິນຟຸຟູ່ຍ,ເຮັດໃຫ້ມີອົກຊີ ແລະ ປ່ອຍຈຸລິນຊີທີ່ເປັນປະໂຫຍດອອກສູ່ດິນເຮັດໃຫ້ພືດ ແລະ ຕົ້ນໄມ້ງາມ.

ດັ່ງນັ້ນການລ້ຽງເຫວະດິນເພື່ອເອົາຂີ້ຂອງມັນໄປເຮັດຝຸ່ນຈິ່ງເໝາະກັບເສດຖະກິດແບບຄອບຄົວທັງເປັນການປະຢັດເງິນ,ທັງຮັກສາສະພາບແວດລ້ອມ ແລະ ຜົນຜະລິດກໍປອດສານເຄມີ



- ຄົ້ນຄິດຫາຜົນປະໂຫຍດທັງຫລາຍຂອງເຫວະດິນ
- ສຶກສາຮອບວົງຈອນຊີວິດຂອງຄົນ ແລະ ຂອງເຫວະດິນ
- ສຶກສາຄວາມຕ້ອງການຂອງຄົນ ແລະ ເຫວະດິນ
- ນຳໃຊ້ຝຸ່ນເຫວະດິນປຸກພືດທີ່ຕົນເອງມັກ
- ນັບເຫວະດິນ
- ຊອກຮູ້ບ່ອນມັກຢູ່ຂອງເຫວະດິນຕາມທຳມະຊາດ
- ລ້ຽງເຫວະດິນໃຫ້ຂະຫຍາຍຕົວດີ
- ສາຍພົວພັນລະຫວ່າງເຫວະດິນ ກັບ ຄົນ



## ມີອັນໃດແດ່ທີ່ເຫວະດິນຈະຊ່ວຍໃຫ້ເດັກເປັນຄົນເກັ່ງ,ດີ ແລະ ມີປະໂຫຍດຕໍ່ສັງຄົມ (ຄົນກັບສັດ ແລະສິ່ງແວດລ້ອມ)







## ຈຸດປະສົງຂອງການລ້ຽງເຫວະດິນ

1. ລ້ຽງເພື່ອກຳຈັດຂີ້ເຫຍື້ອໃນຄົວເຮືອນ ແລະ ເສດພືດຜັກອື່ນໆ
2. ລ້ຽງເຫວະດິນເພື່ອເອົາຂີ້ມັນມາເປັນຝຸ່ນ (ປັບປຸງດິນ)



## ຮູບຮ່າງ ແລະ ລັກສະນະຂອງເທວະດິນ

Ø <u>ຈຸດພິເສດຂອງເທວະດິນທີ່ລ້ຽງພັນ</u> African Nightcrawler, Eudrilus Euseniae

- ອາໃສຢູ່ນຳເສດອາຫານທີ່ກຳລັງເນົ່າເປື່ອຍ
- ໂຕສີແດງໃຫຍ່ ແລະ ຍາວກວ່າຂີ້ກະເດືອນແດງບ້ານເຮົາ
- ທ້ອງແປ,ການເຄື່ອນໄຫວຊ້າແຕກຕ່າງຈາກເທວະດິນທຳມະຊາດ
- ສາມາດປະສົມພັນ,ວາງໄຂ່ ແລະ ມີທຸກໆລະດູ
- ຂະຫຍາຍຕົວໄວກ່ອນຂີ້ກະເດືອນທຳມະຊາດ 2 ເທົ່າໂຕ
- ກິນເສດຕ່າງໆເປັນອາຫານເຊັ່ນ: ເສດຜັກ,ເສດອາຫານ,ເປືອກໝາກໄມ້,ໃບໄມ້,ຫຍ້າ ແລະ ອື່ນໆທີ່ສາມາດຍ່ອຍສະຫລາຍໄດ້



Ø <u>ລັກສະນະຂອງຂີ້ກະເດືອນລາວ</u>

- ອາໃສຢູ່ຕາມໃຕ້ດິນ
- ມີຫລາຍຊະນິດແຕກຕ່າງກັນໄປ(ສີແດງ,ສີດຳ ແລະ ສີອື່ນໆ)
- ໂຕກົມ,ສັ້ນ ແລະ ການເຄື່ອນໄຫວໄວ
- ກິນຂີ້ດິນເປັນອາຫານ ແລະ ການຂະຫຍາຍຕົວຊ້າ
- ລະດູແລ້ງຫາຍາກ ຫລື ອອກມາຕາຍ



## ຜູ້ໃດແດ່ຄວນລ້ຽງເທວະດິນ
## African Nightcrawler, Eudrilus Euseniae



- ຊາວສວນເພື່ອເອົາຝຸ່ນໃສ່ສວນຜັກ
- ຄູ ແລະ ນັກຮຽນເພື່ອໃຫ້ນັກຮຽນໄດ້ສຶກສາຮຽນຮູ້
- ຄອບຄົວເພື່ອກຳຈັດຂີ້ເຫຍື້ອໃນຄົວເຮືອນ, ເອົາຝຸ່ນໃສ່ສວນຄົວ ແລະ ດອກໄມ້



3. ໃຊ້ເຂົ້າໃນການປູກຜັກ

- ເປີດເຟືອງທີ່ປົກອອກຄວັດໃຫ້ເປັນຂຸມເລິກ,ກວ້າງ 5x5 cm
- ເອົາຝຸ່ນເທາະດິນໃສ່ 1 ກຳມືຕໍ່ຂຸມ
- ເອົາເບ້ຍກ້າປູກລົງເນັ້ນໃຫ້ແໜ້ນ ແລ້ວເອົາໃບໄມ້ປົກໄວ້ຄືນ
- ຫົດນ້ຳ 1 ຫາ 2 ຄັ້ງຕໍ່ມື້



ການປູກໝາກເລັ່ນ



ປູກໝາກຖົ່ວ ແລະ ໝາກເຂືອ



## ວົງຈອນຊີວິດຂອງເທາະດິນ




1. ເທາະດິນມີອາຍຸຍາວນານເຖິງ 3 ຫາ 10 ປີ, ອອກໄຂ່ 7-8 ໜ່ວຍຕໍ່ອາທິດ ຕໍ່ໂຕ
2. ໄຂ່ຂອງເທາະດິນຈະເລີ່ມອອກເປັນໂຕນ້ອຍໃນ 18-26 ມື້
3. ໂຕນ້ອຍໃຫຍ່ເຕັມສາວເຕັມບ່າວພາຍໃນ 21-30ມື້ຍາວ 5-15 cm
4. ເທາະດິນຈະເລີ່ມປະສົມພັນໄດ້ໃນເມື່ອອາຍຸ 30-35ມື້ຍາວ15-20cm
5. ປະສົມພັນໄດ້ 12 ຊົ່ວໂມງແລ້ວຈະເລີ່ມວາງໄຂ່
6. ແຕ່ລະໂຕມີທັງສອງອະໄວຍະເພດ ແລະ ສາມາດວາງໄຂ່ໄດ້
7. ເທາະດິນພ້ອມລູກຫລານ 1 g : 128 ໂຕ



ຮູບການປະສົມພັນຂອງເທາະດິນ



ຮູບໄຂ່ຂອງເທາະດິນ

- ສີເຫລືອງອອກຂາວແມ່ນໄຂ່ທີ່ອອກໃໝ່
- ສີແດງໃສໆກຳລັງຈະເບາະ
- ສີດຳແມ່ນໄຂ່ທີ່ເບາະແລ້ວ



2. ກ້າເບ້ຍດ້ວຍການໃຊ້ຝຸ່ນເທາະດິນ

ອຸປະກອນ:

- ເຈ້ຍໜັງສືພິມ,ມີດຕັດ,ກາວ, ຖ່ານໄຟສາຍເກົ່າ ແລະ ກະຖາດຢາງ
- ເອົາເຈ້ຍໜັງສືພິມມາຕັດຂະໜາດຖ່ານໄຟສາຍແລ້ວເຮັດເປັນກົ້ເອົາກາວຕິດເຮັດເປັນເບົ້າກ້າເບ້ຍ
- ເອົາຝຸ່ນຂີ້ກະເດືອນໃສ່ໃນເບົ້າເຈ້ຍດັ່ງກ່າວໃຫ້ເຕັມ (ຮູບທີ່ 2)









- ເອົາແກ່ນຜັກທີ່ກຽມໄວ້ໃສ່ເບົ້າກ້າ 1ແກ່ນ ຕໍ່ 1ເບົ້າ (ຮູບທີ່ 3)
- ຫົດນ້ຳຄ່ອຍໆ ແລະ ທຸກໆມື້
- ປະໄວ້ 7-15 ວັນສາມາດນຳໄປປູກໃສ່ໜານທີ່ກຽມໄວ້ໄດ້

## ການນຳໃຊ້ຝຸ່ນເທອະດິນເຂົ້າໃນການປູກພືດຕ່າງໆ

1. ການກຽມດິນ

- ຫລີກຫຍ້າອອກຈາກບ່ອນທີ່ຈະປູກຜັກ ແຕ່ ບໍ່ຕ້ອງຂຸດດິນ
- ເອົາຝຸ່ນເທອະດິນຢາຍໃສ່ໃຫ້ທົ່ວ 1 ກຳມືຕໍ່ 20-30 $cm^2$


ຮູບທີ່ 1

- ເອົາໃບໄມ້ແຫ້ງ,ຫຍ້າ,ເຟືອງປົກບາງໆໃຫ້ທົ່ວເຖິງ (ຮູບທີ່ 1)
- ຫົດນ້ຳ 2 ຫາ 3 ຄັ້ງຕໍ່ອາທິດ
- ປະໄວ້ 1 ອາທິດ ( 7 ວັນ ) ແລ້ວຈິ່ງເອົາເບ້ຍພືດລົງປູກ






ອາຍຸ 1-7 ວັນ ມີສີຂາວໃສໆ


ອາຍຸ 7-25 ວັນອອກເປັນສີແດງປົນຂາວ


ອາຍຸ 25-35 ວັນອອກເປັນສີແດງປົນດຳ

## ທີ່ຢູ່ອາໃສຂອງເຫວະດິນ

- ບ່ອນຮົ່ມ ຫລື ຕາກແດດກໍ່ໄດ້
- ມີອາຫານກິນ(ຈຸລິນຊີ)
- ມີຄວາມຊຸ່ມ
- ມີອາກາດລ່ວງດີ
- ບ່ອນທີ່ສາມາດຫລົບລີ້ສັດຕ່າງໆໄດ້ເຊັ່ນໄກ່, ນົກ, ໜູ, ມົດ ແລະ ອື່ນໆໄດ້ດີ



ປົກໜານລ້ຽງດ້ວຍໃບໄມ້,ກ້ານພ້າວ ຫຼື ຕາໜ່າງ



- ເອົາຝຸ່ນດັ່ງກ່າວໃສ່ຖົງທີ່ສາມາດຮັກສາຄວາມຊຸ່ມໄດ້, ບໍ່ໃຫ້ຖືກແດດຝຸ່ນມີຄຸນຄ່າ ແລະ ມີຄຸນະພາບເໜືອກວ່າປຸຍເຄມີ (ຮູບທີ່ 4)



ຮູບທີ່ 4



ຮູບທີ່ 5

### 10.ວິທີການຮ່ອນຝຸ່ນເພື່ອໃຫ້ໄດ້ຝຸ່ນງາມ

- ພາຍຫລັງທີ່ເກັບກູ້ແລ້ວບໍ່ໃຫ້ຮ່ອນໂລດ ເພາະຝຸ່ນຍັງມີຄວາມຊຸ່ມຢູ່ເຮັດໃຫ້ຝຸ່ນເປັນກ້ອນ, ບໍ່ໄດ້ຝຸ່ນຫລາຍ ແລະ ບໍ່ງາມພາຍຫລັງທີ່ບັນຈຸໃສ່ເປົາແລ້ວປະໄວ້ 5 ຫາ 10 ວັນຈິ່ງນໍາຝຸ່ນມາຮ່ອນ (ຮູບທີ່ 5)
- ພາຍຫລັງທີ່ຮອນແລ້ວຂີ້ທີ່ຄ້າງເທິງໜ່າງຮ່ອນໃຫ້ເອົາໄປລ້ຽງຕໍ່ ເພາະໃນຝຸ່ນຍັງມີໄຂ່ ແລະ ໂຕນ້ອຍຂອງເຫວະດິນຢູ່
- ຝຸ່ນທີ່ຮ່ອນງາມແລ້ວສາມາດນໍາໄປໃຊ້ໄດ້ເລີຍຖ້າບໍ່ທັນໄດ້ໃຊ້ໃຫ້ບັນຈຸໃສ່ຖົງທີ່ສາມາດຮັກສາຄວາມຊຸ່ມປະໄວ້ບໍ່ໃຫ້ຖືກແສງແດດ

## 9. ວິທີເກັບກູ້ເອົາຂີ້ຂອງເທວະດິນມາເປັນຝຸ່ນອິງຄະທາດ

- ພາຍຫລັງທີ່ປ່ອຍເທວະດິນລົງ 75 ຫາ 90 ວັນ ເກັບກູ້ຝຸ່ນໄດ້
- ເອົາໜ່າງດຳມາວາງໃສ່ເທິງໜານໃໝ່ທີ່ບົ່ມສຸກໄວ້ແລ້ວ 2-3 ອາທິດ (ຮູບທີ່ 1)
- ຍ້າຍເອົາທັງຝຸ່ນ ແລະ ເທວະດິນຈາກໜານເກົ່າມາຢອງໃສ່ ເທິງຕາ ໜ່າງຂອງໜານໃໝ່ໃຫ້ຈົນໝົດ
- ໃນໄລຍະເວລານີ້ຫ້າມບໍ່ໃຫ້ຫົດນ້ຳ


ຮູບທີ່ 1


ຮູບທີ່ 2

- ປະໄວ້ 3-7 ວັນ ເທວະດິນຈະດຸດລອດໜ່າງລົງໄປຫາອາຫານ ຢູ່ໜານໃໝ່ (ຮູບທີ່ 2)
- ສ່ວນເຫຼືອຢູ່ເທິງຕາໜ່າງກໍຈະແມ່ນຂີ້ຂອງເທວະດິນອັນນີ້ແມ່ນຝຸ່ນ ຊີວະພາບດີເດັ່ນເອີ້ນວ່າ " ຝຸ່ນ " ເທວະດິນ (ຮູບທີ່ 3)


ຮູບທີ່ 3



ປະເພດອາຫານລ້ຽງເທວະດິນ



ຫຍ້າ,ໃບໄມ້, ເຟືອງ, ເສດຜັກ, ເສດອາຫານ, ເປືອກໝາກໄມ້ ຫຼື ອື່ນໆ ຈາກຄົວເຮືອນ ແລະ ຈາກຕະຫລາດ





## ຄຸນປະໂຫຍດຂອງເຫວະດິນ

**Ø** ດ້ານສິ່ງແວດລ້ອມ

- ປັບສິ່ງເນົ່າເປື່ອຍໃຫ້ເປັນຝຸ່ນທຳມະຊາດທີ່ມີຄຸນະພາບສູງ
- ດຸດດິນໃຫ້ເປັນຮູ,ເຮັດໃຫ້ດິນຟູຟຸ່ຍ,ດິນມີອາກາດ ເຮັດໃຫ້ພືດງາມ ແລະ ໃຫຍ່ໄວ
- ກຳຈັດຂີ້ເຫຍື້ອໃນຄົວເຮືອນ

**Ø** ດ້ານຜະລິດອາຫານ

- ຂີ້ຂອງເຫວະດິນເປັນຝຸ່ນທຳມະຊາດທີ່ດີຕໍ່ການປູກພືດທຸກຊະນິດມັນປະກອບດ້ວຍຈຸລິນຊີທີ່ມີຊີວິດຢູ່ ແລະ ມັນສາມາດປັບປຸງດິນດ້ວຍໂຕມັນເອງ, ການຂະຫຍາຍພັນຂອງຈຸລິຊີປະເພດນີ້ເປັນການປັບປຸງດິນທີ່ສົມບູນແບບ
- ໂຕຂອງເຫວະດິນເປັນອາຫານທີ່ມີໂປຼຕີນສູງໃຫ້ແກ່ສັດລ້ຽງ





8. ຂໍ້ຫ້າມ

- ຫ້າມເອົານ້ຳແຟບ,ນ້ຳຢາລ້າງຈານ,ນ້ຳມັນເຄື່ອງ ແລະ ສານເຄມີຕ່າງໆ ມາຫົດໃສ່ຄອກລ້ຽງເຫວະດິນເພາະມັນຈະຂ້າຈຸລິນຊີ ແລະ ເຫວະດິນ
- ຫ້າມເອົາໄມ້ເຂ່ຍເຫວະດິນເພາະຈະເຮັດໃຫ້ເຫວະດິນບາດເຈັບ ແລະ ຕາຍໄດ້
- ກ່ອນເກັບກູ້ຝຸ່ນບໍ່ໃຫ້ຫົດນ້ຳ 1 ອາທິດ





ຂໍ້ແນະນຳ

- ເວລາທີ່ບ່ອນລ້ຽງເຫວະດິນຂອງທ່ານມີກິ່ນເໝັນໃຫ້ເອົາເຟືອງ,ໃບໄມ້ປົກ
- ຫົດດ້ວຍນ້ຳ ຊີວະພາບ B.E
- ໄລຍະນີ້ບໍ່ໃຫ້ໃສ່ເສດອາຫານ
- ໃຫ້ລະບາຍນ້ຳທີ່ຂັງອອກໃຫ້ໝົດ

6. ການເບິ່ງແຍງຮັກສາ

- ຍາມແລ້ງຫົດນ້ຳ 2 ຫາ 3 ຄັ້ງຕໍ່ອາທິດເພື່ອຮັກສາຄວາມຊຸ່ມ
- ຍາມຝົນບໍ່ຕ້ອງຫົດກໍ່ໄດ້
- ອຸນຫະພູມທີ່ເໝາະສົມແມ່ນ 25 ອົງສາ (0 ຫາ 35°C)
- ຄວາມຊຸ່ມທີ່ເໝາະສົມແມ່ນ 80 ສ່ວນຮ້ອຍ (70 ຫາ 90%)



7. ການປົກໜານດ້ວຍເຟືອງ ຫລື ໃບໄມ້ເພື່ອປະໂຫຍດດັ່ງຕໍ່ໄປນີ້

- ດັບກິ່ນເໝັນໄດ້ດີ
- ບໍ່ໃຫ້ແມງວັນລົງໄຂ່ໃສ່ - ບໍ່ເກີດໜອນ
- ສັດບໍ່ມາຄວັດເຂ່ຍ
- ຮັກສາຄວາມຊຸ່ມ





## ວິທີລ້ຽງເທວະດິນກຳຈັດຂີ້ເຫຍື້ອ

- ລ້ຽງໃສ່ຊາມຢາງແຕກ,ຖັງດຳແຕກ,ຖາດຢາງແລະ ອື່ນໆ
- ຊາມມີເສັ້ນຜ່ານໃຈກາງຂະໜາດ 40 cm ຂື້ນໄປໃຫ້ໃສ່ເທວະດິນ 1 g ຕໍ່ຊາມ(ປະມານ 120-130ໂຕ) ໃຫ້ສູງຈາກພື້ນ 15-20 cm
- ໃຫ້ອາຫານ1-5g ຕໍ່ມື້ ສາມາດໃຫ້ທຸກໆມື້ໄດ້(ຊາມ,ຄຸ,ຖັງ)
- ຫົດນ້ຳ 2-3 ຄັ້ງຕໍ່ອາທິດ



## ລ້ຽງເທວະດິນເປັນຄອກເພື່ອເອົາຝຸ່ນໃສ່ສວນຄົວ

1. ການກະກຽມສະຖານທີ່
   - ປັບໜ້າດິນໃຫ້ພຽງ ບ່ອນຮົ່ມຫລືຕາກແດດກໍໄດ້
   - ປູດ້ວຍຜ້າຢາງ (ເພື່ອປ້ອງກັນບໍ່ໃຫ້ຮາກໄມ້ມາຍາດກິນຝຸ່ນ ແລະ ສະດວກໃນເວລາເກັບກູ້ຝຸ່ນ)
   - ຖ້າບໍ່ມີຕົ້ນໄມ້ໃຫຍ່ຢູ່ໃກ້ບໍ່ປູກໍໄດ້
2. ອຸປະກອນ
   - ດິນບ່ອກ ຫຼື ໄມ້ແປ້ນ ແລະ ອື່ນໆທີ່ສາມາດປ້ອງກັນບໍ່ໃຫ້
   - ຂີ້ເຫຍື້ອຊະອອກຈາກຄອກຫລືໜານເສດພືດ,ເສດອາຫານ ຕ່າງໆທີ່ຈະເອົາມາບົ່ມເປັນອາຫານໃຫ້ ເທວະດິນ
3. ວິທີການສ້າງຄອກ (ຮູບທີ່ 1 )
   - ປູຜ້າຢາງ,ເອົາດິນບ່ອກ,ໄມ້ແປ້ນມາເຮັດເປັນຄອກສີ່ຫລ່ຽມປິດ
   - ກວ້າງ 1 ແມັດຂຶ້ນໄປຕາມຄວາມເໝາະສົມ
   - ຍາວ 2 ແມັດຂຶ້ນໄປຕາມຄວາມເໝາະສົມ
   - ສູງບໍ່ໃຫ້ເກີນ 20 cm



ຮູບທີ່ 1



4. ຂັ້ນຕອນການບົ່ມ ( ຮູບທີ່ 2 )
- ເອົາເສດອາຫານຕ່າງໆໃສ່ໃນຄອກໃຫ້ເຕັມສູງບໍ່ໃຫ້ເກີນ 30cm
- ຂະໜາດຄອກ ກວ້າງ100cm ຍາວ 200cm ໃສ່ເສດຜັກນ້ຳ ໜັກລວມ 200 Kg – 300 Kg ຕໍ່ຄອກ
- ເອົາໃບໄມ້ແຫ້ງຫລືເຟືອງປົກ 3 ຂໍ້ມື
- ບົ່ມໄວ້ 14 ຫາ 21 ວັນ ແລະ ຫົດນ້ຳ 2 - 3 ເທື່ອຕໍ່ອາທິດ



ຮູບທີ່ 2

5. ຂັ້ນຕອນການລ້ຽງເທວະດິນ
- ບົ່ມເສດອາຫານໄດ້ 14 ວັນ ແລ້ວຈິ່ງປ່ອຍເທວະດິນໃສ່ໄດ້ (ຖ້າໜານບົ່ມຍັງຮ້ອນຢູ່ແມ່ນຕ້ອງລໍຖ້າໃຫ້ເຢັນກ່ອນຈິ່ງປ່ອຍເທວະດິນລົງລ້ຽງໄດ້)
- ປ່ອຍເທວະດິນປະມານ 0,5 g (ປະມານ 180 ໂຕ) ຕໍ່ເນື້ອທີ່ 100 cm x 200 cm